0074

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ທະນາຄານແຫ່ງ ສ.ປ.ປ.ລາວ
ຂາເຂົ້າ ເລກທີ: 3.04
ວັນທີ: 20.01.2015
ໂທລະສັບ: 243710

ເລກທີ /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 19 JAN 2015

## ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

ເລື່ອງ: ປັບລົງລາຄາຂາຍຍ່ອຍນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນໃນ ຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການລັດຖະບານ ເລກທີ 1519/ຫລບ.ກສສ, ລົງວັນທີ 29/102014.
- ອີງຕາມ ມາດຕາ 20 ຂອງກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່, ເລກທີ 05/ສພຊ, ລົງວັນທີ 20/12/2011.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫຼາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດ.

21/1/2015

ພາສີ ພົມມະກອນ

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງບັນດາບໍລິສັດນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟໜ້າປ້ຳ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ລາຍການ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 10,080 | 8,800 | 7,800 |
| 2 | ແຂວງຄຳມ່ວນ | 10,100 | 8,830 | 7,820 |
| 3 | ແຂວງສະຫວັນນະເຂດ | 10,200 | 8,830 | 7,820 |
| 4 | ແຂວງຈຳປາສັກ | 10,220 | 8,840 | 7,850 |
| 5 | ແຂວງບໍ່ແກ້ວ | | 8,900 | 7,880 |
| 6 | ແຂວງຊຽງຂວາງ | | 9,020 | 8,030 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 20/01/2015 , ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ;
- ໃຫ້ບັນດາບໍລິສັດປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ;
- ສ່ວນການຄິດໄລ່ເສັງພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ(ອມພ), ກອງທຶນທາງ, ຄັງແຮ ແລະ ກຳໄລຈາກຄ່າບໍລິ

ການປ້ຳຂາຍຍ່ອຍ· ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟຂອງຈຸດຕ່າງໆ ຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ;

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 0022/ອຄ.ຄພນ, ລົງວັນທີ 08/C1/2015.

* <u>ໝາຍເຫດ:</u>

ສ່ວນຈຸດອື່ນໆ ແມ່ນໃຫ້ຄິດໄລ່ຄ່າຂົນສົ່ງ ແລ້ວບວກເຂົ້າຄືປະຕິບັດຜ່ານມາຢ່າງເໝາະສົມແລ້ວໃຫ້ບໍລິສັດລາຍໃຫ້ກົມການຄ້າພາຍໃນຊາບດ້ວຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການລັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ ແລະ ກົມງົບປະມານ ກະຊວງການເງິນ

(ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)

- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

0060 - -

ກະຊວງອຸດສາຫະກໍາ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ: /ຄພນ.

ນະຄອນຫຼວງວຽງຈັນ, ວັນທີ: 16 Jan 2015

## ໂຄງສ້າງລາຄານໍ້າມັນເຊື້ອໄຟ

ຫົວໜ່ວຍ: ກີບ/ລິດ.

| ຈຸດຂາຍ | ຫ້ອງ / ຊະນິດ | 1 ລາຄາ CIF ນໍາເຂົ້າຕົວຈິງ ໂດລາ | 2 ກີບ | 3 ພາສີ ຂາເຂົ້າ | 4 ອກຊ ຂາເຂົ້າ | 5 ອມພ ຕົ້ນທາງ | 6 ກທ ທາງ | 7 ຄວາມ ສ່ຽງ | 8 ສິ້ນ ເປືອງ | 9 ຄັງແຮ | 10 ລວມ ຕົ້ນທຶນ | 11 ກໍາໄລ ຂາຍຍົກ | 12 ອມພ ມອບຕົ້ນ | 13 ຂາຍຍົກ ປະຈຸບັນ | 14 ຂາຍຍົກ ຄິດໄລ່ | 15 ຂາຍຍົກ ສະເໜີ | 16 ບໍລິການ ປໍ້າ | 17 ຂາຍຍ່ອຍ ປະຈຸບັນ | 18 ຂາຍຍ່ອຍ ຄິດໄລ່ | 19 ຂາຍຍ່ອຍ ສະເໜີ | 20 ເພີ່ມ/ ຫລຸດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ວຽງຈັນ | ອ/ຊ ພິເສດ | $0.6430 | 5,226 | 1,042 | 1,563 | 781 | 420 | 50 | 180 | 400 | 9,662 | 100 | 117 | **10,120** | 9,878 | **9,880** | 200 | **10,320** | 10,078 | **10,080** | (240) |
| | ອ/ຊ ທໍາມະດາ | $0.5949 | 4,835 | 723 | 1,109 | 665 | 420 | 50 | 180 | 400 | 8,381 | 100 | 116 | **8,820** | 8,598 | **8,600** | 200 | **9,020** | 8,798 | **8,800** | (220) |
| | ກາຊວນ | $0.6138 | 4,988 | 249 | 522 | 574 | 420 | 50 | 180 | 400 | 7,384 | 100 | 117 | **7,840** | 7,600 | **7,600** | 200 | **8,040** | 7,800 | **7,800** | (240) |
| ຄໍາມ່ວນ | ອ/ຊ ພິເສດ | $0.6445 | 5,238 | 1,044 | 1,567 | 783 | 420 | 50 | 180 | 400 | 9,682 | 100 | 117 | **10,120** | 9,899 | **9,900** | 200 | **10,320** | 10,099 | **10,100** | (220) |
| | ອ/ຊ ທໍາມະດາ | $0.5974 | 4,855 | 726 | 1,113 | 668 | 420 | 50 | 180 | 400 | 8,412 | 100 | 116 | **8,850** | 8,629 | **8,630** | 200 | **9,050** | 8,829 | **8,830** | (220) |
| | ກາຊວນ | $0.6158 | 5,005 | 249 | 524 | 576 | 420 | 50 | 180 | 400 | 7,404 | 100 | 117 | **7,870** | 7,621 | **7,620** | 200 | **8,070** | 7,821 | **7,820** | (250) |
| ສະຫວັນ | ອ/ຊ ພິເສດ | $0.6518 | 5,297 | 1,056 | 1,584 | 792 | 420 | 50 | 180 | 400 | 9,780 | 100 | 117 | **10,260** | 9,996 | **10,000** | 200 | **10,460** | 10,196 | **10,200** | (260) |
| | ອ/ຊ ທໍາມະດາ | $0.5975 | 4,856 | 726 | 1,113 | 668 | 420 | 50 | 180 | 400 | 8,413 | 100 | 116 | **8,850** | 8,630 | **8,630** | 200 | **9,050** | 8,830 | **8,830** | (220) |
| | ກາຊວນ | $0.6160 | 5,006 | 250 | 524 | 576 | 420 | 50 | 180 | 400 | 7,406 | 100 | 117 | **7,870** | 7,623 | **7,620** | 200 | **8,070** | 7,823 | **7,820** | (250) |
| ປາກເຊ | ອ/ຊ ພິເສດ | $0.6539 | 5,314 | 1,060 | 1,589 | 795 | 420 | 50 | 180 | 400 | 9,808 | 100 | 117 | **10,270** | 10,025 | **10,020** | 200 | **10,470** | 10,225 | **10,220** | (250) |
| | ອ/ຊ ທໍາມະດາ | $0.5984 | 4,863 | 727 | 1,115 | 669 | 420 | 50 | 180 | 400 | 8,425 | 100 | 116 | **8,860** | 8,641 | **8,640** | 200 | **9,060** | 8,841 | **8,840** | (220) |
| | ກາຊວນ | $0.6189 | 5,030 | 251 | 527 | 579 | 420 | 50 | 180 | 400 | 7,436 | 100 | 117 | **7,900** | 7,653 | **7,650** | 200 | **8,100** | 7,853 | **7,850** | (250) |
| ບໍ່ແກ້ວ | ອ/ຊ ທໍາມະດາ | $0.6033 | 4,903 | 733 | 1,124 | 675 | 420 | 50 | 180 | 400 | 8,488 | 100 | 117 | **8,930** | 8,705 | **8,700** | 200 | **9,130** | 8,905 | **8,900** | (230) |
| | ກາຊວນ | $0.6219 | 5,054 | 252 | 529 | 582 | 420 | 50 | 180 | 400 | 7,469 | 100 | 117 | **7,920** | 7,685 | **7,680** | 200 | **8,120** | 7,885 | **7,880** | (240) |
| ຊຽງຂວາງ | ອ/ຊ ທໍາມະດາ | $0.6132 | 4,983 | 745 | 1,143 | 686 | 420 | 50 | 180 | 400 | 8,607 | 100 | 117 | **9,050** | 8,824 | **8,820** | 200 | **9,250** | 9,024 | **9,020** | (230) |
| | ກາຊວນ | $0.6364 | 5,172 | 258 | 541 | 596 | 420 | 50 | 180 | 400 | 7,617 | 100 | 117 | **8,080** | 7,833 | **7,830** | 200 | **8,280** | 8,033 | **8,030** | (250) |

ໝາຍເຫດ
- ອັດຕາແລກປ່ຽນ ທ/ຄ ຄັງວັນທີ 15/01/2015 = 8,127 ກີບ/ໂດລາສະຫະລັດ.
- ອັດຕາແລກປ່ຽນແຈ້ງເສຍພາສີເລີ່ມປະຕິບັດວັນທີ 01/01/2015 = 8,102 ກີບ/ໂດລາສະຫະລັດ.

ຢັ້ງຢືນຈາກ
ກົມພາສີ
ບຸນປະເສີດ ສີກຸນລະບຸດ

ຢັ້ງຢືນຈາກ
ກົມສ່ວຍສາອາກອນ
ສິດທິສອນ ເທບພາສີ

ຢັ້ງຢືນຈາກ
ກົມການຄ້າພາຍໃນ
ບຸນຫຼຸນ ແກ້ວສີພາ